ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0063/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 17 ຕຸລາ 2019

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ ທີ່ນັບຖື.

**ເລື່ອງ:** ລາຍງານເອກະສານລາຍງານການເງິນ ປະຈຳເດືອນ ໃນຮູບແບບ Excel file.

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບຄົ້ນຄວ້າສັງລວມສະຖິຕິເງິນຕາ-ການເງິນ ສະບັບເລກທີ 511/ທຫລ, ລົງວັນທີ 28 ມິຖຸນາ 2018.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ໃນປັດຈຸບັນ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ກຳລັງເກັບກຳຂໍ້ມູນທາງການເງິນຈາກບັນດາພາກສ່ວນຕົ້ນຕໍຂອງເສດຖະກິດ ເພື່ອສັງລວມເຂົ້າເປັນຂໍ້ມູນສະຖິຕິເງິນຕາ-ການເງິນ (M3) ຂອງ ສປປ ລາວ ຊຶ່ງໜຶ່ງໃນພາກສ່ວນທີ່ຕ້ອງໄດ້ເກັບກຳຂໍ້ມູນລວມມີ ຕະຫຼາດຫຼັກຊັບລາວ (ຕລຊລ) ທີ່ຕ້ອງໄດ້ສະໜອງຂໍ້ມູນທາງການເງິນຂອງຕົນ ໃຫ້ກັບ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ໂດຍຜ່ານ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ທັນກັບສະພາບການ ໃນການສັງລວມຂໍ້ມູນ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ໄດ້ຮຽກຮ້ອງໃຫ້ສະໜອງຂໍ້ມູນ ໃນຮູບແບບ Excel file. ດັ່ງນັ້ນ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈຶ່ງແຈ້ງການມາຍັງທ່ານ ດັ່ງນີ້:

1. ໃຫ້ນຳສົ່ງ ໃບດຸ່ນດ່ຽງ ແລະ ໃບສະຫຼຸບຊັບສິນບັດ ຂອງຕະຫຼາດຫຼັກຊັບລາວ ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ທັງ 2 ເອກະສານດັ່ງກ່າວນີ້ ຕ້ອງແຍກເປັນແຕ່ລະສະກຸນເງິນ (ຖ້າມີ) ພ້ອມທັງອັດຕາແລກປ່ຽນທີ່ໄດ້ນຳໃຊ້ໃນການປິດບັນຊີປະຈຳເດືອນ;
3. ການນຳສົ່ງຂໍ້ມູນດັ່ງກ່າວ ແມ່ນໃຫ້ປະຕິບັດຍ້ອນຫຼັງ ນັບແຕ່ເດືອນ ທັນວາ 2017 ເປັນຕົ້ນມາ ຈົນເຖິງປັດຈຸບັນ ແລະ ໃຫ້ສືບຕໍ່ສົ່ງບົດລາຍງານຢ່າງເປັນປົກກະຕິໃນແຕ່ລະເດືອນ ກ່ອນວັນທີ 15 ຂອງເດືອນຖັດໄປ;

4. ໃຫ້ ຕະຫຼາດຫຼັກຊັບລາວ ນຳສົ່ງບົດລາຍງານດັ່ງກ່າວແກ່ **ທ່ານ ວີລະເດດ ທອງວັນຄຳ ຮອງຫົວໜ້າພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ** ຕາມທີ່ຢູ່ອີເມວ: veeladeth111@yahoo.com ຫຼື ບັນທຶກໃສ່ USB ມາສົ່ງຢູ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກໍໄດ້.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງນີ້ໃຫ້ໄດ້ຮັບຜົນດີ.

**ຫົວໜ້າສຳນັກງານ**

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

ສາຍສະໜອນ ຈັນທະຈັກ